ສຳນັກງານ ຄຄຊ
ຮັບ ເລກທີ 1372
ວັນທີ 18 DEC 2017
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 12 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 15 ທັນວາ 2017

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ພະຈິກ ປີ 2017 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ພະຈິກ 2017 ແລະ ທິດທາງແຜນການໃນເດືອນ ທັນວາ 2017 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ຕາງໜ້າລັດຖະບານແຫ່ງ ສປປ ລາວ ລົງນາມບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທາງດ້ານການເງິນ ເພື່ອສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ຂະໜາດກາງ ໃນ ສປປ ລາວ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ກັບ ທະນາຄານພັດທະນາແຫ່ງຊາດຈີນ; ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ເພື່ອຜ່ານຮ່າງກົດໝາຍວ່າດ້ວຍລະບົບການຊຳລະ; ກອງປະຊຸມນາຍົກ-ຮອງນາຍົກ; ກອງປະຊຸມທີມງານເສດຖະກິດຂອງລັດຖະບານ; ກອງປະຊຸມໂຕະມົນລະດັບຊາດ; ກອງປະຊຸມປຶກສາຫາລືກ່ຽວກັບຄວາມເປັນເອກະພາບຂອງການປັບປຸງກົນໄກການຈັດເກັບຄ່າບິນຜ່ານ; ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານເຂົ້າຈົດທະບຽນໃນຕະຫຼາດຊັບລາວ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ສະໄໝສາມັນ ປະຈຳປີ 2017; ກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງຮ່າງກົດໝາຍວ່າດ້ວຍລະບົບຊຳລະ ຕາມການປະກອບຄຳເຫັນຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII; ກອງປະຊຸມປຶກສາຫາລືຮ່າງນະໂຍບາຍສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ; ກອງປະຊຸມເຜີຍແຜ່ເນື້ອໃນຮ່າງຄຳແນະນຳວ່າດ້ວຍການລາຍງານການເຄື່ອນໄຫວດຳເນີນທຸລະກິດຂອງຜູ້ໃຫ້ບໍລິການໂອນເງິນ; ກອງປະຊຸມເຜີຍແຜ່ວຽກງານການຈັດຕັ້ງປະຕິບັດປະເມີນຄວາມສ່ຽງລະດັບຊາດກ່ຽວກັບການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນຂະແໜງສະຖາບັນການເງິນ; ກອງປະຊຸມວິຊາການປັບປຸງຄວາມເຂັ້ມແຂງຂອງຕະຫຼາດທຶນ ສປປ ລາວ;
- ສຳເລັດການຈັດຝຶກອົບຮົມ ແລະ ສຳມະນາໃນຫົວຂໍ້ຕ່າງໆ: ຝຶກອົບຮົມໃນຫົວຂໍ້: "ວຽກງານສັງລວມເອກະສານ"; ສຳມະນາວິຊາການໃນຫົວຂໍ້: "ຮູ້ຈັກການລົງທຶນໃນຮຸ້ນ" ແລະ "ວຽກງານຕະຫຼາດທຶນ";
- ສຳເລັດການຈັດຕັ້ງພິທີ ແລະ ເຂົ້າຮ່ວມພິທີຕ່າງໆ: ເຂົ້າຮ່ວມພິທີວາງສີລາລຶກ ແລະ ເປີດໂຄງການກໍ່ສ້າງຫໍສະພາແຫ່ງຊາດ; ມອບເງິນຊ່ວຍເຫຼືອ ສສ ຫວຽດນາມ ທີ່ປະສົບໄພພິບັດທາງທຳມະຊາດ ພາຍຸເລກທີ 12 (ດຳເຣ) ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ພິທີເປີດລົດຕູ້ວຽກງານປະຊາສຶກສາໃຫ້ຄວາມຮູ້ທາງດ້ານການເງິນ; ຈັດຕັ້ງ

ໂຄສະນາ-ປະຖະກະຖາວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 97 ປີ ຕິດພັນກັບວັນຊາດ ທີ 02 ທັນວາ ແລະ ຈັດພິທີມອບ-ຮັບ ໃບຍ້ອງຍໍ-ຊົມເຊີຍໃຫ້ກົມກອງລວມໝູ່ ແລະ ພະນັກງານ ປະຈຳປີ 2016; ເຂົ້າຮ່ວມທ່ຽວຊົມ ອະນຸສອນສະຖານ ປະທານ ໄກສອນ ພົມວິຫານ ເນື່ອງໃນໂອກາດສະເຫຼີມສະຫຼອງວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 97 ປີ; ເຂົ້າຮ່ວມບໍລິຈາກເລືອດ ພາຍໃຕ້ຫົວຂໍ້: "ບໍລິຈາກເລືອດ ແມ່ນຮັກຊາດ ແລະ ພັດທະນາ" ເນື່ອງໃນໂອກາດສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 42 ປີ;

- ສຳເລັດການຕ້ອນຮັບແຂກສາກົນເຂົ້າພົບປະຄະນະນຳ ທຫລ ມີ ທ່ານ Oliver KLEIN ຄະນະຜູ້ບໍລິຫານ ທະນາຄານ BRED Populaire; ປະທານກຳມະການທະນາຄານຫວຽດຄອມ; ເອກອັກຄະລັດຖະທູດຂອງປະທດສະມາຊິກສະຫະພາບເອີຣົບ ປະຈຳ ສປປ ລາວ; ຊ່ຽວຊານ ຂອງກອງທຶນການເງິນສາກົນ.

## III. <u>ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ</u>

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. <u>ສະພາບເສດຖະກິດເງິນຕາສາກົນ.</u>

- ໃນເດືອນ 11/2017, ສະພາບເສດຖະກິດໂລກແມ່ນຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໄດ້ຮັບແຮງຍູ້ໜູນຂອງມູນຄ່າການສົ່ງອອກ ເປັນຕົ້ນ: ກຸ່ມປະເທດເສດຖະກິດທີ່ພັດທະນາແລ້ວ ຄາດວ່າຈະຂະຫຍາຍຕົວໃນລະດັບ 2,2% ເຊິ່ງປະກອບດ້ວຍບັນດາປະເທດ: ສ.ອາເມລິກາ 2,2%, ສະຫະພາບເອີຣົບ 2,1%, ຍີ່ປຸ່ນ 1,5%, ອັງກິດ 1,7% ແລະ ການາດາ 3,0%. ແລະ ກຸ່ມປະເທດເສດຖະກິດເກີດໃໝ່ ແລະ ກຳລັງພັດທະນາ ຈະຂະຫຍາຍຕົວ 4,6% ໂດຍສະເພາະໃນຂົງເຂດອາຊີ ເຊັ່ນ: ສປ.ຈີນ, ອິນເດຍ ແລະ ອາຊຽນ +5 ຈະຂະຫຍາຍຕົວໃນລະດັບ 6,8%, 6,7% ແລະ 5,2% ຕາມລຳດັບ ເນື່ອງຈາກໄດ້ຮັບແຮງຊຸກຍູ້ຈາກອຸປະສົງພາຍໃນປະເທດ ແລະ ຕະຫຼາດແຮງງານທີ່ຟື້ນຕົວດີຂຶ້ນຕໍ່ເນື່ອງ. ເຖິງຢ່າງໃດກໍ່ຕາມ, ອັດຕາເງິນເຟີ້ໃນປີ 2017 ຄາດວ່າຈະຢູ່ໃນລະດັບ 1,7% ສຳລັບກຸ່ມປະເທດທີ່ພັດທະນາແລ້ວ ແລະ 4,2% ສຳລັບກຸ່ມປະເທດເສດຖະກິດເກີດໃໝ່ ແລະ ກຳລັງພັດທະນາ;

- ສຳລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າ 1,32% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນ: ຕົວເລກຍອດການສັ່ງຊື້ສິນຄ້າທີ່ມີຄວາມທົນທານ ເພີ່ມຂຶ້ນ 2,20% ຂອງເດືອນ 09/2017 ຈາກເພີ່ມຂຶ້ນ 2,00% ໃນເດືອນຜ່ານມາ; ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານ ເພີ່ມຂຶ້ນ 0,70% ຂອງເດືອນ 09/2017 ຈາກຫຼຸດລົງ 1,70% ໃນເດືອນຜ່ານມາ. ໃນຂະນະທີ່, ຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດຫຼຸດລົງເປັນ 222.000 ຄົນ ຂອງອາທິດທີ 14/10/2017 ຈາກ 244.000 ຄົນ ໃນອາທິດຜ່ານມາ;

- ສ່ວນລາຄານ້ຳມັນ ເພີ່ມຂຶ້ນ 5,54% ຈາກ 51,30 ໂດລາ/ບາເຣວ ມາເປັນ 54,14 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນແອັດຊັງ ຂອງ ສ.ອາເມລິກາ ຫຼຸດລົງ 3,31 ລ້ານບາເຣວ ຂອງອາທິດທີ 03/11/2017, ຈາກຫຼຸດລົງ 4,02 ລ້ານບາເຣວໃນອາທິດຜ່ານມາ. ພ້ອມກັນນັ້ນ, ປະເທດຊາອຸດິອາຣະເບຍ ແລະ ລັດເຊຍ ຍັງສືບຕໍ່ປັບຫຼຸດກຳລັງການຜະລິດນ້ຳມັນດິບຢ່າງຕໍ່ເນື່ອງ ເພື່ອຫຼຸດປະລິມານນ້ຳມັນໃນຄັງຂອງກຸ່ມປະເທດທີ່ພັດທະນາແລ້ວ ແລະ ປັບຫຼຸດອຸປະທານນ້ຳມັນສ່ວນເກີນໃນຕະຫຼາດ. ໃນດ້ານລາຄາຄຳ ຫຼຸດລົງ 1,17% ຈາກ 1.294,03 ໂດລາ/ອອນ ມາເປັນ 1.278,91 ໂດລາ/ອອນ ເນື່ອງຈາກກອງທຶນ SPDR ເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກງກຳໄລ, ເຮັດໃຫ້ປະລິມານຄຳທີ່ກອງທຶນ SPDR ຖືຄອງ ຫຼຸດລົງ 7,68 ໂຕນ ເປັນ 843,09 ໂຕນ ໃນວັນທີ 10/11/2017 ຈາກ 850,77 ໂຕນໃນວັນທີ 27/10/2017 ບວກກັບເງິນໂດລາທີ່ແຂງຄ່າຂຶ້ນໃນຕະຫຼາດສາກົນ.

### 2. <u>ສະພາບເງິນຕາພາຍໃນ.</u>

- ອັດຕາເງິນເຟີ້ປະຈຳເດືອນ 11/2017 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,27% ຫຼຸດລົງຈາກ 0,49% ໃນເດືອນ 10/2017;

- ຖານເງິນຕາປະຈຳເດືອນ 11/2017 ເພີ່ມຂຶ້ນ 375,50 ຕື້ກີບ ຫຼື 1,02% ທຽບໃສ່ເດືອນ 10/2017, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,31%. ປະລິມານເງິນ M2 ເພີ່ມຂຶ້ນ 2.120,91 ຕື້ກີບ ຫຼື 2,80% ທຽບໃສ່ເດືອນ 10/2017 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.086,11 ຕື້ກີບ ຫຼື 13,20%;

- ອັດຕາແລກປ່ຽນທີ່ລະບົບໃນເດືອນ 11/2017 ທຽບເດືອນ 10/2017 ເໜັງຕີງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກເງິນກີບແຂງຄ່າ 0,002% ທຽບເງິນໂດລາ ແລະ ອ່ອນຄ່າ 0,36% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາ ເຫັນວ່າເງິນກີບອ່ອນຄ່າ 0,35% ທຽບກັບເງິນໂດລາ ແລະ ອ່ອນຄ່າ 7,63% ທຽບເງິນບາດ;

- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 11/2017 (13/10-13/11/2017) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ເພີ່ມຂຶ້ນ 4,10% ຖ້າທຽບໃສ່ເດືອນ 10/2017. ທທກ ຂາຍເງິນຕາຕ່າງປະເທດ ສຸດທິ 27,40 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນບາດສຸດທິ 1.704,60 ລ້ານບາດ ຫຼື 52,97 ລ້ານໂດລາສະຫະລັດທຽບເທົ່າ ແຕ່ຊື້ເງິນໂດລາສຸດທິ 25,57 ລ້ານໂດລາສະຫະລັດ). ໃນນັ້ນ ທຫລ ໄດ້ດຸ່ນດ່ຽງຂາຍເງິນຕາຕ່າງປະເທດໃຫ້ ທທກ ໂດຍຂາຍເງິນຕາຕ່າງປະເທດ ສຸດທິ 64,48 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຂາຍເງິນໂດລາສຸດທິ 53,01 ລ້ານໂດລາສະຫະລັດ ແລະ ຂາຍເງິນບາດສຸດທິ 369,10 ລ້ານບາດ ຫຼື 11,47 ລ້ານໂດລາສະຫະລັດທຽບເທົ່າ). ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 42,50 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 35,18 ລ້ານໂດລາສະຫະລັດ ແລະ ເງິນບາດ 235,40 ລ້ານບາດ ຫຼື 7,32 ລ້ານໂດລາສະຫະລັດ);

- ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 11/2017 (12/10-11/11/2017) ໄດ້ມີກະແສເງິນໄຫຼເຂົ້າຜ່ານລະບົບທະນາຄານສຸດທິ 454,45 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼເຂົ້າ ຈຳນວນ 1.112,03 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 375,92 ລ້ານໂດລາສະຫະລັດ (ໃນນັ້ນ: ມີໂຄງການທາງລົດໄຟ, ເຂື່ອນໄຟຟ້ານ້ຳອູ ແລະ ເຂື່ອນໄຟຟ້າເຊລະນອງ), ຮັບເງິນຈາກການລົງທຶນໃນການອອກພັນທະບັດຂອງລັດຖະບານ ຈຳນວນ 360,16 ລ້ານໂດລາສະຫະລັດ ແລະ ຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 257,68 ລ້ານໂດລາສະຫະລັດ, ສ່ວນກະແສເງິນໄຫຼອອກ ຈຳນວນ 657,72 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 387,93 ລ້ານໂດລາສະຫະລັດ, ຊຳລະຄ່າບໍລິການ ຈຳນວນ 80,42 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ຂອງ ທທກ ຈຳນວນ 80 ລ້ານໂດລາສະຫະລັດ.

## 3. ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ

- ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 13/11/2017 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 67.735,26 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 2,69%. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 13,46%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 0,10% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,09% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 5,01% ຊຶ່ງກວມເອົາ 53,91% ຂອງເງິນຝາກທັງໝົດ;

- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 13/10/2017 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 65.487,46 ຕື້ກີບ ເພີ່ມຂຶ້ນ 0,45% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,02%. ສິນເຊື່ອເປັນເງິນກີບ ກວມເອົາ 49,96% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 50,04% ຂອງສິນເຊື່ອທັງໝົດ;

- ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 27,65 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 3,25%, ເກັບຕົ້ນທຶນໄດ້ 23,09 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 8,12% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 11/2017 ມີຈຳນວນ 3.173,69 ຕື້ກີບ ເທົ່າກັບ 95,35% ຂອງແຜນການ (3.328,31 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.112,31 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 295,20 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 334,96 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 431,22 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ ມີຈຳນວນ 4.192 ສະບັບ ເພີ່ມຂຶ້ນ 23,22% ເປັນເງິນຈຳນວນ 1.783,56 ຕື້ກີບ ເພີ່ມຂຶ້ນ 16,37% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບ

ມີມູນຄ່າສູງໃນເດືອນນີ້ມີຈຳນວນ 205 ຄັ້ງ ເພີ່ມຂຶ້ນ 48,55% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 773,09 ຕື້ກີບ ເພີ່ມຂຶ້ນ 21,03% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/10-24/11/2017 ມີຈຳນວນ 15.657 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວ ຈຳນວນ 15.111 ຄັ້ງ ມີມູນຄ່າການໂອນ 5.323,28 ຕື້ກີບ ເພີ່ມຂຶ້ນ 59,12% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 4.404 ຄັ້ງ. ໃນນັ້ນ ມີ 42 ພາກສ່ວນທີ່ເຮັດທຸລະກຳ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

– **ກະຊວງການເງິນ:** ມີການເຄື່ອນໄຫວ ຈຳນວນ 546 ຄັ້ງ ມີມູນຄ່າການໂອນ 689,52 ຕື້ກີບ ເພີ່ມຂຶ້ນ 128,01%.

**4.2 <u>ການຊື້-ຂາຍພັນທະບັດ</u>**

– ໃນເດືອນ 11/2017 ພັນທະບັດກະຊວງການເງິນບ້ວງລະດົມທຶນ ຜ່ານ ທຫລ (ບ້ວງ ທຫລ ບໍ່ຄ້ຳປະກັນ) ມີການຈຳໜ່າຍ 346 ຕື້ກີບ ຊຶ່ງປະກອບດ້ວຍ: ທະນາຄານພົງສະຫວັນ 1 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ 10 ຕື້ກີບ, ບໍລິສັດລັດວິສາຫະກິດຫວຍພັດທະນາ 30 ຕື້ກີບ, ກອງທຶນປະກັນສັງຄົມ 5 ຕື້ກີບ ແລະ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ 300 ຕື້ກີບ ແລະ ໄດ້ໄຖ່ຖອນພັນທະບັດຄືນໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 300 ຕື້ກີບ;

– ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.812 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.678 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.980 ຕື້ກີບ);

– ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 11/2017 ບໍ່ມີການຈຳໜ່າຍພັນທະບັດ ທຫລ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 404 ລ້ານໂດລາສະຫະລັດ.

**5. <u>ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 1.008,97 ຈຸດ ຫຼຸດລົງ 1,46% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 0,55% ເມື່ອທຽບໃສ່ດັດຊະນີ ທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 753.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,61 ຕື້ກີບ ເພີ່ມຂຶ້ນ 21,39% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 47,34% ຂອງມູນຄ່າການຊື້-ຂາຍທັງໝົດ;

- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.230 ກີບ/ຮຸ້ນ ຫຼຸດລົງ 122 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 229.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,20 ຕື້ກວ່າກີບ ເພີ່ມຂຶ້ນ 26,13% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 31,45% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.911 ກີບ/ຮຸ້ນ ຫຼຸດລົງ 240 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 469.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,30 ຕື້ກວ່າກີບ ເພີ່ມຂຶ້ນ 39,51% ເມື່ອທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 44,41% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ;

- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.833 ກີບ/ຮຸ້ນ ຫຼຸດລົງ 567 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 14,35 ລ້ານກວ່າກີບ ຫຼຸດລົງ 41,24% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ ກວມເອົາ 56,25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.002 ກີບ/ຮຸ້ນ ເພີ່ມຂຶ້ນ 86 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 20.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ

41,83 ລ້ານກີບ ເພີ່ມຂຶ້ນ 396,26% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 53,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 2.950 ກີບ/ຮຸ້ນ ບໍ່ມີການປ່ຽນແປງເມື່ອທຽບໃສ່ເດືອນຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 295.000 ກີບ ຫຼຸດລົງ 66,67% ທຽບໃສ່ເດືອນຜ່ານມາ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 100% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ;

- ຮຸ້ນຂອງບໍລິສັດ ພູສີກໍ່ສ້າງ ມະຫາຊົນ (PCD) ຊຶ່ງເລີ່ມມີການຊື້-ຂາຍທຳອິດໃນວັນທີ 10 ຕຸລາ 2017 ມີລາຄາຊື້-ຂາຍສະເລ່ຍ 1.583 ກີບ/ຮຸ້ນ, ມີປະລິມານຊື້-ຂາຍທັງໝົດ 31.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 49,56 ລ້ານກີບ ຫຼຸດລົງ 85,31% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດສະເລ່ຍ ກວມເອົາ 14,75% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PCD ທັງໝົດ.

6. <u>ວຽກງານອື່ນໆ</u>

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 197,08 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 171% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 178 ລ້ານໂດລາສະຫະລັດ ກວມເອົາ 92% ຂອງເງິນທັງໝົດ, ເງິນບາດ 555 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 321,57 ລ້ານໂດລາສະຫະລັດທຽບເທົ່າ ເພີ່ມຂຶ້ນ 52% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 251,75 ລ້ານໂດລາສະຫະລັດ ກວມເອົາ 78% ຂອງເງິນທັງໝົດ, ເງິນບາດ 2,15 ຕື້ບາດ, 40.885 ເອີໂຣ, 10.950 ຝຣັ່ງສະວິດ, 7.885 ປອນສະເຕີລິງ, 13,25 ລ້ານເຢັນ, 20.000 ໂດລາແຄນນາດາ, 56.170 ໂດລາອົດສະຕາລີ ແລະ 1.000 ໂຄຣນາສະວີເດັນ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງສະບັບໃໝ່ປ່ຽນແທນໃຫ້ແກ່ທະນາຄານການຄ້າສາກົນລາວ ຈຳກັດ (ຈາກທະນາຄານການຄ້າສາກົນລາວ ຈຳກັດ ມາເປັນ ທະນາຄານ ບີໄອຊີ ລາວ ຈຳກັດ); ສຳເລັດການລົງກວດກາການຈັດຕັ້ງປະຕິບັດການຮັກສາຄວາມປອດໄພໜ່ວຍບໍລິການ ຈຳນວນ 29 ໜ່ວຍ ຂອງທະນາຄານທຸລະກິດ 9 ແຫ່ງ; ສຳເລັດການລົງກວດກາທະນາຄານທຸລະກິດ 3 ແຫ່ງ ຄື: ທະນາຄານລາວ-ຝຣັ່ງ ປະຈຳປີ 2016 ຫາ ໄຕມາດ 2/2017, ທະນາຄານ ກຸງເທບ ສາຂານະຄອນຫຼວງວຽງຈັນ ແລະ ທະນາຄານ ມາຣູຮານ ເຈແປນລາວ ຈຳກັດ ປະຈຳປີ 2016 ຫາ ໄຕມາດ 3/2017; ສຳເລັດການສ້າງແຜນແມ່ບົດ ແລະ ແຜນການຈັດຕັ້ງປະຕິບັດການພັດທະນາຄຸ້ມຄອງທະນາຄານທຸລະກິດຕາມມາດຖານບາເຊວ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຖາວອນ ຂອງ ສກຈບ ສິນທະວັງທັນໃຈ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວຂອງ ສກຈບ ພັນທະວີ; ສຳເລັດແຈ້ງໂຈະຊົ່ວຄາວການດຳເນີນທຸລະກິດໂອນເງິນດ່ວນ ບໍລິສັດເທບສີເມືອງ ການຄ້າ ຈຳກັດ;

– ສຳເລັດບົດລາຍງານຕ່າງໆຄື: ບົດຄົ້ນຄວ້າບົດບາດຂອງເງິນຢວນ ຕໍ່ເສດຖະກິດຂອງ ສປປ ລາວ;

– ໄດ້ຮັບທະນະບັດປອມ ປະເພດໃບ 100.000 ກີບ ຈຳນວນ 01 ໃບ ແລະ ປະເພດໃບ 20.000 ກີບ ຈຳນວນ 01 ໃບ ຈາກທະນາຄານທຸລະກິດ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 07 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 668 ສະບັບ.

## <u>ພາກທີ II</u>

## <u>ວຽກງານຈຸດສຸມໃນເດືອນຕໍ່ໄປ</u>

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດ

ຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການປະຕິບັດຕໍ່ບັນຊີທີ່ບໍ່ມີການເຄື່ອນໄຫວຢູ່ທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກວດສອບພາຍນອກ; ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນ ແລະ ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍຫຼັບຊັບ; ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ;

– ສືບຕໍ່ມອບ-ຮັບເອກະສານແຈ້ງຊັບສິນ ແລະ ລາຍຮັບ ຂອງບັນດາກົມ ແລະ ທຽບເທົ່າກົມ ທີ່ຂຶ້ນກັບ ທຫລ ທີ່ຢູ່ສູນກາງ;

– ກະກຽມຈັດກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈຳປີ 2017 ແລະ ກອງປະຊຸມສະພາບໍລິຫານທະນາຄານນະໂຍບາຍ ຄັ້ງທີ II ປະຈຳປີ 2017;

– ກະກຽມຈັດກອງປະຊຸມເປີດກວ້າງ ເພື່ອທາບທາມຄຳເຫັນໃສ່ຮ່າງດຳລັດວ່າດ້ວຍການປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນ;

– ກະກຽມເຂົ້າຮ່ວມພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງ ສ.ເກົາຫຼີ;

– ຄະນະສະເພາະກິດແກ້ໄຂບັນຫາບໍລິສັດ ພີເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນຂາອອກ-ຂາເຂົ້າ ຍັງສືບຕໍ່ຕິດຕາມການແກ້ໄຂສະພາບບໍລິສັດດັ່ງກ່າວຢ່າງຕໍ່ເນື່ອງ;

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ

ຜູ້ວ່າການ

ດຣ ສອນໄຊ ສິດພະໄຊ

ສົ່ງ:
- ຄະນະຜູ້ວ່າການ ທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການ ສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມຄົ້ນຄວ້າ-ສັງລວມ, ຫສນຍ.
- ຫ້ອງການກະຊວງແຜນການ ແລະ ການລົງທຶນ.
- ຫ້ອງການກະຊວງການເງິນ.
- ຄະນະກຳມະທິການແຜນການ ການເງິນ ແລະ ການກວດສອບ ສະພາແຫ່ງຊາດ.
- ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ.
- ຄະນະຫ້ອງການ ທຫລ.
- ສຳເນົາ.